care®

# ການປ່ຽນແປງນະໂຍບາຍ
# ການປົກປ້ອງເດັກຂອງແຄຣ໌ອົດສະຕາລີ

ກໍລະກົດ 2022

Supporting women.
Defeating poverty.

# ການປ່ຽນແປງນະໂຍບາຍການປົກປ້ອງເດັກຂອງແຄຣ໌ອົດສະຕາລີ ກໍລະກົດ 2022

ນະໂຍບາຍການປົກປ້ອງເດັກຂອງອົງການແຄຣ໌ອົດສະຕາລີ (ນະໂຍບາຍນີ້) ລະບຸເຖິງຄໍາໝັ້ນສັນຍາຂອງອົງການແຄຣ໌ອົດສະຕາລີ ແລະ ວິທີການປ້ອງກັນ ແລະ ປົກປ້ອງເດັກນ້ອຍ. ຊຶ່ງສອດຄ່ອງກັບກັບນະໂຍບາຍການປົກປ້ອງຂອງອົງການແຄຣ໌ສາກົນ (CARE International). ນະໂຍບາຍດັ່ງກ່າວໄດ້ມີການທົບທວນຄືນ ເພື່ອຮັບປະກັນຄວາມສອດຄ່ອງ ແລະ ຮັບຮອງຕາມຂໍ້ກໍານົດນິຕິບັນຍັດ ແລະ ເປັນການທົບທວນເຖິງການປະຕິບັດຕົວຈິງທີ່ດີຂອງນະໂຍບາຍ. ທັງເປັນໂອກາດເພື່ອຊີ້ແຈງບາງຈຸດໃຫ້ຈະແຈ້ງຂຶ້ນກ່ວາເກົ່າໃນນະໂຍບາຍ, ເພື່ອຮັບປະກັນຜົນສໍາເລັດໃນການບັງຄັບໃຊ້ ແລະ ປະຕິບັດຕົວຈິງ.

**ມີການປ່ຽນແປງແນວໃດ?**

ເປັນສິ່ງສໍາຄັນທີ່ພະນັກງານທຸກຄົນອ່ານນະໂຍບາຍສະບັບປັບປຸງນີ້ໃຫ້ລະອຽດ. ເຖິງຢ່າງໃດກໍຕາມ, ພວກເຮົາໄດ້ລະບຸຈຸດສໍາຄັນຂອງການປ່ຽນແປງໃນນະໂຍບາຍດັ່ງລຸ່ມນີ້:

**ຫຼັກການ**

ພວກເຮົາໄດ້ຢືນຢັນໃນຄໍາຫມັ້ນສັນຍາຂອງພວກເຮົາວ່າ ຜົນປະໂຫຍດທີ່ດີທີ່ສຸດຂອງເດັກນ້ອຍຈະເປັນບຸລະມະສິດອັນຕົ້ນຕໍ ໃນການພິຈາລະນາທຸກການກະທໍາທັງຫມົດທີ່ກ່ຽວພັນກັບເດັກນ້ອຍ; ເອົາວິທີການການສຸມໃສ່ຜູ້ທີ່ຖືກເຄາະຮ້າຍເປັນຈຸດໃຈກາງ; ແລະ ຮ່ວມມືກັບທຸກໆພາກສ່ວນທີ່ພວກເຮົາຮ່ວມງານ ເພື່ອຄຸ້ມຄອງຄວາມສ່ຽງຕໍ່ເດັກນ້ອຍ.

**ຂອບເຂດຂອງນະໂຍບາຍ**

ຂອບເຂດຢູ່ໃນນະໂຍບາຍເກົ່າກວມເອົາ "ບຸກຄະລາກອນທັງຫມົດທີ່ຂຶ້ນກັບອົງການແຄຣ໌ອົດສະຕາລີ", ຊຶ່ງພວກເຮົາຍັງບໍ່ທັນໄດ້ກໍານົດຢ່າງຈະແຈ້ງ, ສະນັ້ນນະໂຍບາຍໃໝ່ໄດ້ລະບຸວ່າ: ບຸກຄະລາກອນຂອງບັນດາຫ້ອງການປະຈໍາປະເທດ ແລະ ພະນັກງານ, ອາສາສະຫມັກ ແລະ ນັກຮຽນຝຶກງານທີ່ມີສ່ວນຮ່ວມໂດຍກົງໃນການຄຸ້ມຄອງແຜນງານ ຫຼື ໂຄງການ ຫຼື ທຶນທັງໝົດ ຫຼື ບາງສ່ວນທີ່ສະໜັບສະໜູນໂດຍອົງການແຄຣ໌ອົດສະຕາລີ ແລະ ລວມທັງໃນປະເທດທີ່ບໍ່ເປັນສະມາຊິກ ແມ່ນຈະຢູ່ໃນຂອບເຂດຂອງນະໂຍບາຍສະບັບປັບປຸງ. ຊຶ່ງພາກສ່ວນດັ່ງກ່າວລວມກັນຈະເອີ້ນວ່າ “ຄູ່ຮ່ວມງານຂອງແຄຣ໌”. ຄູ່ຮ່ວມງານຂອງແຄຣ໌ ແລະ ບຸກຄະລາກອນຂອງແຄຣ໌ອົດສະຕາລີ ລວມກັນເອີ້ນວ່າ “ຄົນຂອງແຄຣ໌”. ພວກເຮົາຍັງໄດ້ຊີ້ແຈງໃຫ້ຈະແຈ້ງອີກວ່າໃຜຖືວ່າເປັນ “ຄູ່ຮ່ວມງານ”. ແຂກມາຢ້ຽມຢາມແມ່ນລວມຢູ່ໃນຂອບເຂດຂອງນະໂຍບາຍ ພຽງແຕ່ບາງພາກສ່ວນຂອງນະໂຍບາຍທີ່ກ່າວເຖິງໂດຍສະເພາະ.

**ການຮ່ວມມືກັບອົງການຈັດຕັ້ງອື່ນໆ**

ນະໂຍບາຍໄດ້ລະບຸວ່າການປະຕິບັດແມ່ນຫມາຍຄວາມວ່າແນວໃດ ແລະ ອະທິບາຍຂໍ້ບັງຄັບໃນການດໍາເນີນການປະເມີນຜົນການປະຕິບັດຕົວຈິງກ່ຽວກັບການປົກປ້ອງເດັກນ້ອຍຂອງຄູ່ຮ່ວມງານຂອງແຄຣ໌ ແລະ ຄູ່ຮ່ວມງານ, ແລະ ເພື່ອສະຫນັບສະຫນູນການສ້າງຄວາມເຂັ້ມໃນການປະຕິບັດຕົວຈິງຂອງເຂົາເຈົ້າ.

ໃນນະໂຍບາຍດັ່ງກ່າວຍັງໄດ້ອະທິບາຍເຖິງພັນທະ ຢູ່ໃນສັນຍາກັບຄູ່ຮ່ວມງານທີ່ຕ້ອງປະຕິບັດຕາມ, ເຊິ່ງຄ້າຍຄືກັນກັບນະໂຍບາຍເກົ່າ.

**ການປະເມີນຄວາມສ່ຽງ**

ໃນພາກການປະເມີນຄວາມສ່ຽງໄດ້ມີການໃຫ້ລາຍລະອຽດກ່ຽວກັບຂະບວນການຂອງການປະເມີນຄວາມສ່ຽງ.

**ວິທີເອົາຜູ້ຖືກເຄາະຮ້າຍຜູ້ຖືກຜົນກະທົບເປັນຈຸດໃຈກາງ**

ພາກນີ້ໄດ້ຖືກປ່ຽນໃຫມ່ເພື່ອພິຈາລະນາຄວາມຕ້ອງການທີ່ເປັນເອກະລັກຂອງເດັກ. ຄວາມຕ້ອງການສິ່ງຜູ້ເຄາະຮ້າຍ

Supporting women.
Defeating poverty.

ຜູ້ລອດຊີວິດ ເພື່ອສະໜັບສະໜູນຕາມຄວາມຕ້ອງການແມ່ນຢູ່ໃນພາກທີ່ແຕກຕ່າງກັນໃນນະໂຍບາຍ ແຕ່ໄດ້ຍ້າຍມາພາຍໃຕ້ຫົວຂໍ້ນີ້.

**ການຮັບສະໝັກ ແລະ ການຄັດເລືອກພະນັກງານ**

ນະໂຍບາຍຊີ້ໃຫ້ເຫັນວ່າຂໍ້ແນະນຳການຈ້າງງານແມ່ນສຳລັບຄົນຂອງແຄຣ໌ ເພື່ອປະຕິບັດກັບບຸກຄະລາກອນຂອງແຄຣ໌ (ໝາຍເຖິງບຸກຄະລາກອນທັງໃນແຄຣ໌ອິດສະຕາລີ ແລະ ປະເທດສະມາຊິກຂອງແຄຣ໌ອື່ນໆ). ໃນຂະນະທີ່ພວກເຮົາຮັບຜິດຊອບໃນການກວດສອບວ່າຄູ່ຮ່ວມງານມີກົນໄກການຄຸ້ມຄອງບຸກຄະລາກອນທີ່ເໝາະສົມບໍ່ ເພື່ອໃຫ້ພວກເຮົາສາມາດໝັ້ນໃຈໄດ້ວ່າພວກເຂົາມີການຮັບສະໝັກພະນັກງານທີ່ປອດໄພສຳລັບເດັກນ້ອຍ (ເປັນສ່ວນໜຶ່ງຂອງການປະເມີນຄວາມສ່ຽງ), ພວກເຮົາບໍ່ຮັບຜິດຊອບຕໍ່ການມີສ່ວນພົວພັນຂອງບຸກຄະລາກອນຂອງຄູ່ຮ່ວມງານ, ດັ່ງນັ້ນບໍ່ສາມາດກຳນົດຂະບວນການກວດກາໄດ້.

ນະໂຍບາຍຍັງຊີ້ແຈງວ່າ "ການປ່ຽນແປງສະຖານະການ" ແມ່ນຫຍັງ (ເຊິ່ງເຮັດໃຫ້ເກີດຄວາມຕ້ອງການໃຫມ່, ການກວດສອບທາງອາຍາ, ຕາມກະຊວງການຕ່າງປະເທດ ແລະການຄ້າ ແລະ ນະໂຍບາຍປົກປ້ອງເດັກຂອງອິດສະຕາລີ).
ຂໍ້ກຳນົດທີ່ຕ້ອງມີການແຈ້ງໃຫ້ແຄຣ໌ອິດສະຕາລີ ຖ້າມີບຸກຄະລາກອນໃດນຶ່ງຖືກກ່າວຫາວ່າໄດ້ກະທຳ, ຖືກຈັບ ຫຼື ຖືກຕັດສິນລົງໂທດ, ການກະທຳຜິດທາງອາຍາທີ່ກ່ຽວຂ້ອງກັບການລ່ວງລະເມີດເດັກແມ່ນຢູ່ໃນພາກອື່ນຂອງນະໂຍບາຍເກົ່າ, ແລະໄດ້ຖືກຍ້າຍໄປຢູ່ໃນພາກນີ້.

**ກົດລະບຽບຫຼັກຈັນຍາບັນ**

ສັນຍາການຈ້າງງານຈະມີຂໍ້ບັງຄັບການໂຈະສັນຍາທັນທີເມື່ອພະນັກງານຖືກສືບສວນຈາກການລະເມີດນະໂຍບາຍນີ້ ຫຼື ກົດລະບຽບຈັນຍາບັນຂອງການປົກປ້ອງເດັກ ໄດ້ມີການຂະຫຍາຍໃຫ້ກ້ວາງອອກສຳລັບຄົນຂອງແຄຣ໌ທັງໝົດ (ຜ່ານມາພຽງແຕ່ສຳລັບອົງການແຄຣ໌ອິດສະຕາລີ).

**ການນຳໃຊ້ຮູບພາບ, ຮູບແຕ້ມ ແລະ ຂໍ້ມູນເດັກນ້ອຍ**

ສື່ມວນຊົນສັງຄົມ ແລະ ຜ່ານລະບົບການສົ່ງຂໍ້ຄວາມ (ເຊັ່ນ: WhatsApp, Telegram) ໃນນະໂຍບາຍໃໝ່ໄດ້ລະບຸສະເພາະເຈາະຈົງ ແລະ ຍັງລະບຸວ່າການຍິນຍອມຕ້ອງແມ່ນອາຍຸທີ່ເໝາະສົມ ແລະ ສາມາດຖອນຄືນໄດ້ທຸກເວລາ.

**ການລາຍງານ ແລະ ຕອບໂຕ້ຕໍ່ການກ່າວຫາ**

ນະໂຍບາຍຊີ້ແຈງວ່າເດັກນ້ອຍ ແລະ ສະມາຊິກຊຸມຊົນຕ້ອງມີຄວາມຊັດເຈນກ່ຽວກັບວິທີລາຍງານຄວາມກັງວົນ, ບໍ່ພຽງຮັບຮູ້ສຳລັບຄົນຂອງແຄຣ໌ ແລະ ຄູ່ຮ່ວມງານເທົ່ານັ້ນ.
ໃນນະໂຍບາຍ, ຕຳແໜ່ງຜູ້ອຳນວຍການຝ່າຍຍຸດທະສາດ ແລະ ການໃຫ້ບໍລິການ (Director SES) ໄດ້ປ່ຽນແທນຫົວໜ້າຝ່າຍປະຕິບັດງານ (COO), ຊຶ່ງເປັນບຸກຄົນທີ່ມີຄວາມຮັບຜິດຊອບໃນການຕັດສິນໃຈກ່ຽວກັບການລາຍງານ ແລະ ການສືບສວນ, ຮ່ວມກັບຜູ້ອຳນວຍການປະຈຳປະເທດ.
ຄົນຂອງແຄຣ໌ ແລະ ຄູ່ຮ່ວມງານ ຈຳເປັນຕ້ອງໄດ້ລາຍງານການລ່ວງລະເມີດເດັກໃນທຸກປະເພດໃຫ້ກັບຜູ້ໃຫ້ທຶນ, ໂດຍບໍ່ຄຳນຶງເຖິງຜົນຂອງການສືບສວນ.
ຂັ້ນຕອນການລາຍງານການປົກປ້ອງ ແລະ ການສືບສວນ ແມ່ນສ້າງຂຶ້ນເພື່ອສະແດງໃຫ້ເຫັນວິທີການຄຸ້ມຄອງການລາຍງານ ແລະ ການສືບສວນ.

**ຄຳນິຍາມ**

ເດັກນ້ອຍແມ່ນຖືກກຳນົດໄວ້ໃນນະໂຍບາຍວ່າ ແມ່ນບຸກຄົນທີ່ມີອາຍຸຕ່ຳກວ່າ 18 ປີ, ໂດຍບໍ່ຄຳນຶງເຖິງກົດໝາຍແຫ່ງຊາດ.
ອັນນີ້ແມ່ນສອດຄ່ອງກັບສົນທິສັນຍາຂອງສະຫະປະຊາຊາດກ່ຽວກັບສິດທິເດັກ ແລະ ມາດຕະຖານຂອງອົງການແຄຣ໌ສາກົນ.

ກົດລະບຽບການລ່ວງລະເມີດເດັກ ແລະ ການຫາຜົນປະໂຫຍດຕໍ່ເດັກ ໄດ້ຖືກກໍານົດໄວ້ຕ່າງຫາກ (ໃນນະໂຍບາຍເກົ່າແມ່ນກໍານົດໄວ້ບ່ອນດຽວກັນ). ຄໍານິຍາມຂອງການປິ່ນປົວເດັກປ່ອຍ ແລະ ການເຮັດວຽກກັບເດັກນ້ອຍໄດ້ຖືກເອົາເຂົ້າໃນນະໂຍບາຍໃໝ່. ມີການປ່ຽນກົດລະບຽບຫຼັກຈັນຍາບັນການປົກປ້ອງເດັກ, ຢູ່ໃນເອກະສານຊ້ອນທ້າຍ 2 ຂອງນະໂຍບາຍໃໝ່ລວມທັງ:

- ຂອບເຂດຂອງກົດລະບຽບຫຼັກຈັນຍາບັນໄດ້ຖືກປັບປຸງເພື່ອ ສະທ້ອນເຖິງຂອບເຂດທີ່ຈະແຈ້ງຂອງນະໂຍບາຍ ເຊິ່ງນໍາໃຊ້ກັບ ຄົນຂອງແຄຣ໌, ຄູ່ຮ່ວມງານ ແລະ ແຂກມາຢ້ຽມຢາມ. ຄົນຂອງແຄຣ໌ ແລະ ຄູ່ຮ່ວມງານ ແມ່ນຈໍາເປັນຕ້ອງໄດ້ລົງລາຍເຊັນໃນກົດລະບຽບການ, ແລະ ຄົນຂອງແຄຣ໌ມີຄວາມຮັບຜິດຊອບຕໍ່ແຂກທີ່ມາຢ້ຽມຢາມໃຫ້ປະຕິບັດຕາມມາດຕະຖານຂອງຕົນ.
- ກົດລະບຽບການໄດ້ຖືກປ່ຽນແປງເພື່ອສະທ້ອນໃຫ້ເຫັນວ່າເປັນ 'ກົດລະບຽບທີ່ຊັດເຈນ' ແທນທີ່ຈະເປັນ 'ຄູ່ມືຕົວຢ່າງ'. ນີ້ຫມາຍຄວາມວ່າຜູ້ທີ່ຢູ່ໃນຂອບເຂດຂອງນະໂຍບາຍຕ້ອງປະຕິບັດຕາມກົດລະບຽບຫຼັກຈັນຍາບັນດັ່ງກ່າວ.
- ມີການເພີ່ມເຕີມຂໍ້ບັງຄັບທີ່ ຄົນຂອງແຄຣ໌ ແລະ ຄູ່ຮ່ວມງານ ຈະບໍ່ຢູ່ພາຍໃຕ້ອິດທິພົນຂອງເຫຼົ້າ ຫຼື ຢາເສບຕິດໃນຂະນະທີ່ມີການເຮັດວຽກກັບເດັກທີ່ບໍ່ມີຜູ້ປົກຄອງ ຫລື ຜູ້ດູແລເດັກ (ປະເດັນບໍ່ໃຊ້ກັບລູກຂອງຕົນ).

**ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ**

ຕູ້ປ.ນ 4326, ຖະໜົນໜອງລ້າງທໍ່, ບ້ານ ໜອງລ້າງທໍ່,
ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ : (856-21) 217 727
ອີເມວ: Lao.info@careint.org
ເວັບໄຊ: https://www.careint.org.la/
ເຟສບຸກ/ຢູທູບ: CARE internationnal in Lao PDR

CARE®